ຝຶກອົບຮົມໄອທີ ກ່ຽວກັບການນໍາໃຊ້ໂປຼແກຼມ ວຽກງານກວດກາ
Written by Administrator
Thursday, 21 December 2017 09:28 - Last Updated Monday, 25 December 2017 09:43
ວັນທີ 21 ທັນວາ 2017 ນີ້ ຢູ່ທີ່ຫ້ອງປະຊຸມພະແນກ ວິທະຍາສດ ແລະ ເຕັກໂນໂລຊີ ແຂວງບໍ່ແກ້ວ
ໄດ້ຈັດກອງປະຊຸມຝຶກອົບຮົມ ວຽກງານໄອທີ ກ່ຽວກັບການນໍາໃຊ້ໂປຼແກຼມ ວຽກງານກວດກາ
ພາຍໃຕ້ໂຄງການຄົ້ນຄວ້າ ສ້າງຄວາມເຂັ້ມແຂງໃຫ້ວຽກງານການກວດກາຂຶ້ນ.

ພາຍໃຕ້ການເປັນປະທານ ຂອງທ່ານ ເຮີເຊັງ ເຢຍປໍເຮີ ຫົວໜ້າກົມກວດກາ ກະຊວງວິທະຍາສາດ ແລະ
ເຕັກໂນໂລຊີ, ເປັນປະທານຮ່ວມຄັ້ງນີ້ ມີ ທ່ານ ຄອນໄຊ ສະຕິ ຫົວໜ້າພະແນກ ວິທະຍາສາດ ແລະ
ເຕັກໂນໂລຊີ ແຂວງບໍ່ແກ້ວ, ພາຍໃນກອງປະຊຸມ ມີຮອງຫົວໜ້າພະແນກ, ຫົວໜ້າຂະແໜງ, ຮອງຂະແໜງ
ພະນັກງານ-ວິຊາການ ພາຍໃນພະແນກ, ວິຊາການ ຫວຕ ເມືອງ, ພະນັກງານ-ວິຊາການ ມາຈາກ ພະແນກ
ກວດກາພັກ-ລັດແຂວງ ແລະ ທີມງານທີ່ມາຈາກກົມກວດກາ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
ເຂົ້າຮ່ວມເປັນວິທະຍາກອນນໍາພາຈັດຕັ້ງຝຶກອົບຮົມຄັ້ງນີ້; ມີຜູ້ເຂົ້າຮ່ວມທັງໝົດ 34
ທ່ານ, ຍິງ 10 ທ່ານ ກອງປະຊຸມໄດ້ ດໍາເນີນເປັນເວລາ 1 ມື້ ຈື່ງໄດ້ອັດລົງ.
ກອງປະຊຸມໄດ້ຮັບຟັງການນໍາສະເໜີໂດຍຫຍໍ້ ຈາກທ່ານ ເຮີເຊັງ ເຢຍປໍເຮີ ຫົວໜ້າກົມກວດກາ
ກ່ຽວກັບວຽກງານຂອງກົມກວດກາ, ການພັດທະນາເວັບໄຊ໌ຂອງກົມ,
ການພັດທະນາໂປຼແກຼມຮັບໃຊ້ຕ່າງໆ ຂອງວຽກງານກວດກາ,
ເຊີ່ງທ່ານໄດ້ຍົກໃຫ້ເຫັນເຖີງຄວາມຈໍາເປັນ ແລະ ຄວາມສໍາຄັນ ຂອງວຽກງານດັ່ງກ່າວ,
ເຊີ່ງມັນຈະອໍານວຍຄວາມສະດວກໃນຫຼາຍໆ
ດ້ານຕໍ່ກັບການນໍາມາມູນໃຊ້ເຂົ້າໃນໜ້າວຽກຂອງພວກເຮົາໃຫ້ມີຄວາມສະດວກ ວອງໄວ
ປະຢັດຄາໃຊ້ຈ່າຍ, ປະຢັດເວລາຕື່ມອີກ ແລະ ເພື່ອເປັນການຕິດຕາມ ກວດກາ
ປະສານງານລະຫວ່າງສູນກາງ ແລະ ທ້ອງຖີນໃຫ້ດີຂຶ້ນເທື່ອລະກ້າວ.
ກອງປະຊຸມໃນຄັ້ງນີ້ແມ່ນໄດ້ຝຶກອົບຮົມວຽກງານການກວດກາແບບທັນສະໄໝ
ດ້ວຍລະບົບໂປຣແກຣມຈັດເກັບຂໍ້ມູນວຽກງານກວດກາຂອງກົມກວດກາ ແລະ ເວັບໄຊຂອງກົມກວດກາ
ເຂົ້າໃນການຄຸ້ມຄອງວຽກງານການກວດກາ (ຂັ້ນສູນກາງ ແລະ ທ້ອງຖິ່ນ)
ເປັນເຄື່ອງມືໃນການເຜີຍແຜ່ນິຕິກຳທີ່ຕິດພັນກັບວຽກງານກວດກາ,
ການເກັບຮັກສາຂໍ້ມູນຢ່າງປອດໄພ ແລະ ສາມາດເອີ້ນໃຊ້ຂໍມູນໂດຍໄວ.
ມີການສາທິດການນຳໃຊ້ເບື້ອງຕົ້ນ, ໄດ້ສາທິດການນຳເອົາຂ່າວຂື້ນເທິງເວັບໄຊ
ການສົ່ງບົດລາຍງານໃຫ້ສູນກາງ (ກວຕ). ເຊິ່ງເວັບໄຊດັ່ງກ່າວມີຈຸເພິເສດກໍ່ຄືສາມາດສະເໜີ,
ຮັບຄຳຮ້ອງຟ້ອງ-ຮ້ອງທຸກ ຈາກປະຊາຊົນທຸກຄົນ ເພື່ອຈະໄດ້ຮັບຮູ້ ແ ລະ ຊອກຫາທິດທາງ
 1 / 2

.